*Souphanouvong University Journal of Multidisciplinary Research and Development*
2024, Vol.9. No. 348-356
https://doi.org/10.69692/SUJMRD0901348

# ທັດສະນະຄະຕິຂອງນັກສຶກສາທີ່ມີຕໍ່ການຮຽນ-ການສອນ ວິຊາວິໄຈ ສາຍຄູປະຖົມຊັ້ນສູງໄລຍະພັກສັ້ນປີຮຽນ ລະບົບ 11+1+2 ປີ 1 ຂ ໃນວິທະຍາໄລຄູຄັງໄຂ ສົກຮຽນ 2022-2023

**ປານີ ມາໄລສານ***

*ວິທະຍາໄລຄູຄັງໄຂ ແຂວງຊຽງຂວາງ, ສປປ ລາວ*

**ຕິດຕໍ່ພົວພັນ: ວິທະຍາໄລຄູຄັງໄຂ ແຂວງຊຽງຂວາງ, ເບີໂທ: +856 20 2234 4556; ອີເມວ: Panymls7576@gmail.com*

***ຂໍ້ມູນບົດຄວາມ:***
*ການສົ່ງບົດ: 17 ພະຈິກ 2022*
*ການປັບປຸງ: 19 ມີນາ 2023*
*ການຕອບຮັບ: 29 ມີນາ 2023*

**ບົດຄັດຫຍໍ້**

ການວິໄຈໃນຄັ້ງນີ້ເປັນການວິໄຈກ່ຽວກັບ "ທັດສະນະຄະຕິຂອງນັກສຶກສາທີ່ມີຕໍ່ການຮຽນ-ການສອນ ວິຊາ ວິໄຈ ສາຍຄູປະຖົມຊັ້ນສູງໄລຍະພັກສັ້ນປີຮຽນ ລະບົບ 11+1+2 ປີ 1 ຂ ໃນວິທະຍາໄລຄູຄັງໄຂ ສົກຮຽນ 2022-2023" ໂດຍກຳນົດ 2 ຈຸດປະສົງຄື: 1) ເພື່ອສຶກສາທັດສະນະຄະຕິຂອງນັກສຶກສາຕໍ່ການຮຽນ-ການສອນ ວິຊາ ວິໄຈ ໃນສາຍຄູປະຖົມຊັ້ນສູງໄລຍະພັກສັ້ນປີຮຽນ ລະບົບ 11+1+2 ປີ 1 ຂ ໃນວິທະຍາໄລຄູຄັງໄຂ ສົກຮຽນ 2022-2023 ແລະ 2) ເພື່ອສຶກສາບັນຫາອຸປະສັກ ແລະ ແນວທາງປັບປຸງການຮຽນ-ການສອນ ວິຊາ ວິໄຈ ໃນວິທະນາໄລຄູຄັງໄຂ. ການສຶກສາຄັ້ງນີ້ນຳໃຊ້ຂໍ້ມູນແບບປະ ລິມານ, ກຸ່ມຕົວຢ່າງທີ່ໃຊ້ໃນການສຶກສາໄດ້ແກ່ນັກສຶກສາ ສາຍຄູປະຖົມຊັ້ນສູງໄລຍະພັກສັ້ນປີຮຽນ ປີ 1 ຂ ເຊິ່ງມີຈຳນວນທັງໝົດ 30 ຄົນ, ເຄື່ອງມືທີ່ໃຊ້ໃນການວິໄຈໄດ້ແກ່ແບບສອບຖາມ, ສະຖິຕິທີ່ໃຊ້ໄດ້ແກ່: ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະ ຖານ ຜົນການວິເຄາະຂໍ້ມູນສະແດງອອກດັ່ງນີ້:

ຜົນການຜົນການວິເຄາະ ທັດສະນະຄະຕິຂອງນັກສຶກສາຕໍ່ການຮຽນ-ການສອນ ວິຊາວິໄຈ ໃນສາຍຄູປະຖົມຊັ້ນສູງໄລ ຍະພັກສັ້ນປີຮຽນ ສົກຮຽນ 2022-2023 ໂດຍລວມ ທຸກດ້ານແມ່ນຢູ່ໃນລະດັບປານກາງ ເຊິ່ງມີຄ່າສະເລ່ຍໂດຍລວມເທົ່າກັບ ($\bar{X}$=3.41) ຄ່າຜັນປ່ຽນມາດຕະຖານເທົ່າກັບ (SD=0.03). ເມື່ອແຍກເປັນແຕ່ລະດ້ານສະແດງອອກຄື: ດ້ານເນື້ອໃນຫຼັກສູດ ໂດຍລວມ ແລະ ແຍກຕາມລາຍຂໍ້ແມ່ນຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$=3.57 SD=0.02). ດ້ານການຈັດກິດຈະກຳການຮຽນ-ການສອນ ໂດຍລວມ ແລະ ແຍກຕາມລາຍຂໍ້ແມ່ນຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$=3.55; SD=0.03). ດ້ານການນຳໃຊ້ສື່ການສອນ ໂດຍລວມ ແລະ ແຍກຕາມລາຍຂໍ້ແມ່ນຢູ່ໃນລະດັບປານກາງ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$=3.38; SD=0.03). ດ້ານສະພາບແວດລ້ອມ ໂດຍລວມ ແລະ ແຍກຕາມລາຍຂໍ້ແມ່ນຢູ່ໃນລະດັບປານກາງ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$=2.96; SD=0.03). ດ້ານການວັດ ແລະ ປະເມີນຜົນ ໂດຍລວມ ແລະ ແຍກຕາມລາຍຂໍ້ແມ່ນຢູ່ໃນລະດັບປານກາງ ເຊິ່ງມີ ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$=3.61; SD=0.03).

**ຄຳສຳຄັນ:** *ທັດສະນະຄະຕິ, ນັກສຶກສາ, ການຮຽນ-ການສອນ, ວິໄຈ.*

# Students Attitudes Towards the Study-teaching of Research primary teacher line high class end of school year vacation period system 11+1+2 year 1, Khangkhay Teacher Training College in Academic Year 2022-2023

**Pany MALAYSAN***

*Khangkhay Teacher Training College, Xiengkhouang Province, Lao PDR*

***Correspondence:** Pany MALAYSAN, Khangkhay Teacher Training College, Tel: +856 20 2234 4556; E-mail: Panymls7576@gmail.com*

***Article Info:***
*Submitted: Nov 17, 2022*
*Revised: Mar 19, 2023*
*Accepted: Mar 29, 2023*

## Abstract

This research is about research "Students Attitudes Towards the Study-teaching of Research primary teacher line high class end of school year vacation period system 11+1+2 year 1, Khangkhay Teacher Training College in Academic Year 2022-2023". The aim is 1) To study the attitude of students towards teaching-learning of Research primary teacher line high class end of school year vacation period system 11+1+2 year 1 in Khangkhay Teacher Training College in Academic Year 2022-2023 and 2) To study the problem of obstacles and improvement guidelines study-teaching of Research in Khangkhay Teacher Training College. This study uses quantitative data, The sample group used in the study wass tudents primary teacher line high class end of school year vacation period system 11+1+2 year 1 which has a total 30 People, the instrument used in the research is a questionnaire, Statistics used: Average value and Standard exchange rate The data analysis results are expressed as follows:

The results of the analysis Students Attitudes Towards the Study-teaching of Research primary teacher line high class end of school year vacation period Academic Year 2022-2023 overall all aspects are moderate which has an overall average value equal to ($\bar{X}$=3.41), The standard deviation is equal to (SD=0.03). When separated into each side, it is expressed as: Overall course content and sort by item is at several levels which has an average value, The standard deviation is equal to ($\bar{X}$=3.57; SD=0.02). The organization of teaching-learning activities as a whole and sort by item is at several levels which has an average value, The standard deviation is equal to ($\bar{X}$=3.55; SD=0.03). The use of teaching materials as a whole and and sort by item is at a moderate level value, which has an average value, The standard deviation is equal to ($\bar{X}$=3.38; SD=0.03). Overall environment and sort by item is at a moderate level which has an average value, The standard deviation is equal to ($\bar{X}$=2.96; SD=0.03). Overall measure ment and evaluation and sort by item is at a moderate level which has an average value, The standard deviation is equal to ($\bar{X}$=3.61; SD=0.03).

**Keywords:** *Attitudes, Students, Study-teaching, Research subjects*

## 1. ພາກສະເໜີ

ການສຶກສາເປັນເຄື່ອງມືທີ່ສຳຄັນໃນການພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບ. ດັ່ງນັ້ນ, ການຈັດການສຶກສາເພື່ອພັດທະນາຄົນໃຫ້ມີຄຸນນະພາບເປັນສິ່ງຈຳເປັນຢ່າງຍິ່ງ ເພາະການສຶກສາເຮັດໃຫ້ສັກກາຍະພາບທີ່ມີຢູ່ໃນຕົວຄົນໄດ້ຮັບການພັດທະນາ ເພື່ອເຮັດໃຫ້ເປັນຄົນທີ່ຮູ້ຈັກຄິດ, ວິເຄາະ, ຮູ້ຈັກແກ້ບັນຫາ, ມີຄວາມຄິດລິເລີ່ມ ສ້າງສັນ, ຮູ້ຈັກຮຽນຮູ້ດ້ວຍຕົນເອງ, ສາມາດປັບຕົວໃຫ້ທັນກັບການປ່ຽນແປງທີ່ເກີດຂຶ້ນຢ່າງໄວວາ, ມີຈະລິຍະທຳ, ຄຸນນະທຳ, ຮູ້ຈັກເພິ່ງຕົນເອງ ແລະ ສາມາດດຳເນີນຊີວິດຢູ່ໃນສັງຄົມໄດ້ຢ່າງເປັນສຸກ ດ້ວຍເຫດນີ້ ຈິ່ງເນັ້ນຜູ້ຮຽນເປັນສຳຄັນ ໂດຍມີຈຸດໝາຍໃນການຮຽນຮູ້ແບບບຸລະນາການອັນກໍ່ໃຫ້ເກີດລັກສະນະທີ່ປາຖະໜາເຊັ່ນ: ເກັ່ງ, ດີ, ມີສຸກຄຸນລັກສະນະທີ່ເກັ່ງຄື ນັກຮຽນມີຄວາມຮູ້, ຄວາມສາມາດຢູ່ໃນລະດັບສູງຈະກໍ່ໃຫ້ເກີດຄວາມສົມດູນ ແລະ ເຮັດໃຫ້ຜູ້ຮຽນມີຄວາມສຸກໂດຍການຮຽນ ຮູ້ໃນເລື່ອງຄວາມດີ, ຄວາມງາມ ແລະ ຄວາມຈິງ. ຄວາມດີຄື ນັກຮຽນມີການພັດທະນາທາງດ້ານຄຸນນະທຳ ,ຈະລິຍະທຳຄ່ານິຍົມ ຫຼືທັດສະນະຄະຕິທີ່ດີຕໍ່ວິຊາທີ່ຮຽນ ແລະ ຕໍ່ຄູຜູ້ສອນ (Vongyai, 2544).

ວິທະຍາໄລຄູຄັງໄຂແມ່ນສະຖາບັນໜຶ່ງທີ່ມີໜ້າທີ່ໃນການກໍ່ສ້າງຄູ ແລະ ມີພາລະບົດບາດເທົ່າທຽມກັບວິທະຍາໄລຄູໃນບັນດາວິທະຍາໄລຄູອື່ນໆໃນທົ່ວປະເທດ ເຊິ່ງມີພາລະໜ້າທີ່ໃນການກໍ່ສ້າງຄູ, ຍົກລະດັບຄູໃຫ້ມີຄວາມຮູ້, ຄວາມສາມາດ ເພື່ອໄປຮັບໃຊ້ຢູ່ໃນທ້ອງຖິ່ນໂດຍສະເພາະແມ່ນ ແຂວງຊຽງຂວາງ ແລະ ແຂວງຫົວພັນ. ເຊິ່ງວິທະຍາໄລຄູຄັງໄຂໄດ້ກຳນົດ ວິໄສທັດຄື: "ວິທະຍາໄລຄູຄັງໄຂ ເປັນສະຖາບັນສ້າງຄູທີ່ມີຄຸນນະພາບ ເປັນຄູມືອາຊີບທີ່ດີເລີດ ປະເສີດດ້ວຍຄຸນນະທຳ ນຳໜ້າດ້ານການວິໄຈ". ເນື່ອງຈາກວ່າສະຖາບັນແຫ່ງນີ້ເປັນບ່ອນສຶກສາຄົ້ນຄວ້າຫາຄວາມຮູ້ ແລະ ເປັນບ່ອນກໍ່ສ້າງຄົນໃຫ້ກາຍເປັນຄູ. ນອກຈາກການກໍ່ສ້າງຝຶກຝົນໃຫ້ມີຄວາມຮູ້ຄວາມສາມາດແລ້ວຍັງຈະຕ້ອງໄດ້ຝຶກໃຫ້ມີກິລິຍາມາລະຍາດທີ່ດີ, ມີຄຸນນະທຳທີ່ງົດງາມ ແລະ ລວມທັງອະລິຍະບົດຕ່າງໆໃນການເຄື່ອນໄຫວໄປມາ ແລະ ວັດທະນະທຳຮີດຄອງປະເພນີ ແລະ ການນຸ່ງຖືຕ່າງໆໃຫ້ຖືກຕ້ອງກັບວັດທະນະທຳຂອງຊາດລາວເຮົາ (Yangjiamoua, 2019).

ທັດສະນະຄະຕິທີ່ດີຕໍ່ການຮຽນຮູ້ເປັນຮາກຖານທີ່ສຳຄັນທີ່ກໍ່ໃຫ້ເກີດຄວາມຕັ້ງໃຈ, ຄວາມຢາກຮູ້ ແລະ ຢາກຮູ້ຢາກເຫັນໃນວິຊາທີ່ສອນໂດຍຄູອາຈານ ແລະ ເອົາໃຈໃສ່ໃນການຮຽນຮູ້ຢ່າງແທ້ຈິງ. ນອກຈາກນັ້ນ, ຍັງເຮັດໃຫ້ຜູ້ຮຽນເກີດຄວາມພໍໃຈ ຮູ້ສຶກວ່າການຮຽນເປັນຄວາມສຸກ, ຕ້ອງສຶກສາຄົ້ນຄວ້າລິງມືເຮັດ ແລະ ເມື່ອຜູ້ຮຽນເກີດຄວາມພໍໃຈໃນສິ່ງທີ່ຮຽນ, ຜູ້ຮຽນກໍຈະຂີນຂວາຍພະຍາຍາມສຶກສາຄົ້ນຄວ້າຫາຄວາມຮູ້, ກຽມຄວາມພ້ອມທີ່ຈະແກ້ໄຂອຸປະສັກຕ່າງໆໃຫ້ຜ່ານໄປດ້ວຍດີ ເພື່ອໃຫ້ບັນລຸຈຸດປະສົງທີ່ຕົນວາງໄວ້ (Mekraksa Vanit, 2515) ໃນດ້ານຈິດວິທະຍາການຮຽນ-ການສອນໃຫ້ ການຍອມຮັບວ່າໃນການສອນຕ້ອງມຸ່ງສ້າງໃຫ້ຜູ້ຮຽນມີທັດສະນະຄະຕິທີ່ດີຕໍ່ວິຊານັ້ນຄວບຄູ່ໄປກັບຄວາມຮູ້ ແລະ ທັກສະຕ່າງໆ ທັງນີ້ເພາະວ່າທັດສະນະຄະ ຕິຕໍ່ວິຊາໃດໆ ຍ່ອມເປັນຮາກຖານທີ່ຈະເຮັດໃຫ້ຜູ້ຮຽນຄຳນຶງເຖິງຄວາມສຳຄັນຂອງການຮຽນ, ເຫັນຄຸນຄ່າ ແລະ ເອົາໃຈໃສ່ຕໍ່ວິຊານັ້ນໆ (Phanit, 2517). ຈາກປະເດັນແນວຄິດຕ່າງໆທີ່ປະກົດໃຫ້ເຫັນແນວໂນ້ມຂອງແນວທາງການຈັດຂະບວນການຮຽນ-ການສອນແນວໃໝ່ທາງດ້ານວິຊາທໍລະນີສັນຖານວິທະຍາໃນລະບົບໂຮງຮຽນໃນປັດຈຸບັນ ແລະ ອານາຄົດ.

ວິໄຈ ແມ່ນວິຊາໜຶ່ງທີ່ໄດ້ຈັດເຂົ້າໃນການຮຽນ-ການສອນ ຢູ່ໃນທຸກສາຍ, ທຸກລະບົບ ເຊິ່ງເປັນວິຊາທີ່ມີຄວາມສຳຄັນຫຼາຍ ທີ່ໄດ້ຮຽນກ່ຽວກັບວິວັດທະນາການ ແລະ ປະເພດຂອງການວິໄຈແບບປະຕິບັດ, ການວິໄຈປະຕິບັດທາງການສຶກສາ, ການວິໄຈປະຕິບັດເພື່ອການສ້າງພະລັງຮ່ວມໃນໂຮງຮຽນ, ການວິໄຈໃນຊັ້ນຮຽນ ແລະ ການພັດທະນາການສອນ, ເທັກນິກການຮວບຮວມຂໍ້ມູນສຳລັບການວິໄຈປະຕິບັດການ, ການວິເຄາະ ແລະ ນຳສະເໜີການວິໄຈ (Champathong, 2009).

ທັດສະນະຄະຕິຕໍ່ການຮຽນວິຊາ ວິໄຈ ນັ້ນມີຄວາມສຳຄັນຫຼາຍ ເພາະເປັນປັດໄຈທີ່ມີອິດທິພົນຕໍ່ຄວາມສາ ມາດທາງດ້ານການວິໄຈ ທັງນີ້ເນື່ອງຈາກຄວາມສຳເລັດໃນການຮຽນນັ້ນບໍ່ໄດ້ຂຶ້ນຢູ່ກັບຄວາມສະຫຼາດເທົ່ານັ້ນ ແຕ່ຍັງຂຶ້ນຢູ່ກັບທັດສະນະຄະຕິທີ່ດີຕໍ່ການຮຽນນຳອີກ ເນື່ອງຈາກທັດສະນະຄະຕິເປັນກະແຈສຳຄັນສູ່ຄວາມສຳເລັດໃນການຮຽນຂອງຜູ້ຮຽນຄືກັນກັບການຮຽນຮູ້ໃນຂະແໜງວິຊາອື່ນໆ ທີ່ມີທັດສະນະຄະຕິເປັນກຳລັງສຳຄັນສູ່ຄວາມສຳເລັດໃນການຮຽນຮູ້ເຊັ່ນກັນ.

ຈາກການສັງເກດການຮຽນ-ການສອນວິຊາ ວິໄຈ ເຫັນວ່າ ວິຊານີ້ເປັນວິຊາຍາກ, ເນື້ອໃນບົດຮຽນບໍ່ຕໍ່ເນື່ອງ, ນັກຮຽນຍັງຂາດຄວາມຮູ້ພື້ນຖານ ຈຶ່ງເຮັດໃຫ້ບໍ່ສົນໃຈໃນການຮຽນ, ບໍ່ກະຕືລືລົ້ນ, ນັກສຶກສາທົບທວນເນື້ອໃນບົດຮຽນໜ້ອຍ, ບໍ່ມັກຖາມຄູ ແລະ ບໍ່ມັກຄົ້ນຄວ້າບົດຮຽນເພີ່ມເຕີມ ທັງທີ່ວິຊານີ້ມີຄວາມສຳຄັນ ເນື່ອງຈາກວ່າເປັນວິຊາທີ່ເນັ້ນໜັກໃຫ້ຜູ້ຮຽນເຂົ້າໃຈ. ເຖິງຢ່າງໃດກໍຕາມການຈັດການຮຽນ-ການສອນ ໃນວິທະຍາໄລຄູຄັງໄຂ ຍັງຕ້ອງພັດທະນາໄປໃຫ້ທັນຕໍ່ສະຖານະການທີ່ປ່ຽນແປງຢູ່ຕະຫຼອດເວລາ ເພື່ອໃຫ້ຄຸນນະພາບທາງດ້ານວິຊາການມີຄວາມເຂັ້ມແຂງປະກອບກັບນັກສຶກສາໄດ້ຮັບຄຸນນະພາບຈາກການຈັດການຮຽນ-ການສອນທີ່ມີປະສິດທິພາບດ້ວຍດັ່ງ ນັ້ນ, ເຮັດໃຫ້ຜູ້ວິໄຈຈຶ່ງມີຄວາມສົນໃຈທີ່ຈະສຶກສາກ່ຽວກັບ ທັດສະນະຄະຕິຂອງນັກສຶກສາທີ່ມີຕໍ່ການຮຽນ-ການສອນວິຊາ ວິໄຈ ສາຍຄູປະຖົມຊັ້ນສູງໄລຍະພັກສົ້ນປີຮຽນ ລະບົບ 11+1+2 ປີ 1 ຂ ໃນວິທະຍາໄລຄູຄັງໄຂ ສົກ ຮຽນ 2022-2023.

ໂດຍມີ 2 ຈຸດປະສົງໃນການຄົ້ນຄວ້າຄື: 1) ເພື່ອສຶກສາທັດສະນະຄະຕິຂອງນັກສຶກສາຕໍ່ການຮຽນ-ການສອນ ວິຊາ ວິໄຈ ໃນສາຍຄູປະຖົມຊັ້ນສູງໄລຍະພັກສົ້ນປີຮຽນ ລະບົບ 11+1+2 ປີ 1 ຂ ໃນວິທະຍາໄລຄູຄັງໄຂ ສົກຮຽນ 2022-2023. 2) ເພື່ອສຶກສາບັນຫາອຸປະສັກ ແລະ ແນວທາງປັບປຸງການຮຽນ-ການສອນ ວິຊາ ວິໄຈ ໃນວິທະນາໄລຄູຄັງໄຂ.

## 2. ອຸປະກອນ ແລະ ວິທີການ

### 2.1 ວິທີການ

ການສຶກສາຄັ້ງນີ້ເປັນການສຶກສາແບບປະລິມານ ເພື່ອວັດທັດສະນະຄະຕິຂອງນັກສຶກສາຕໍ່ການຮຽນ-ການສອນ ວິຊາ ວິໄຈ ໃນສາຍຄູປະຖົມຊັ້ນສູງໄລຍະພັກສົ້ນປີຮຽນ ໃນວິທະຍາໄລຄູຄັງໄຂ ໂດຍການສຶກສາເອກະສານງານວິໄຈທີ່ກ່ຽວຂ້ອງກັບຄວາມເພິ່ງພໍໃຈໃນການຮຽນຂອງນັກສຶກສາທີ່ເປັນແນວຄິດ, ທິດສະດີ, ຜົນງານວິໄຈທີ່ກ່ຽວຂ້ອງກັບຕົວແປທີ່ສຶກສາເພື່ອໃຊ້ເປັນແນວທາງໃນການສ້າງແບບສອບຖາມ.

### 2.2 ປະຊາກອນ ແລະ ກຸ່ມຕົວຢ່າງ

ການສຶກສາຄັ້ງນີ້ ຜູ້ຄົ້ນຄວ້າໄດ້ສຶກສາຈາກປະຊາກອນໂດຍກົງຄື: ນັກສຶກສາສາຍຄູປະຖົມຊັ້ນສູງໄລຍະພັກສົ້ນປີຮຽນ ລະບົບ 11+1+2 ປີ 1 ຂ ຈຳນວນ 30 ຄົນ, ເນື່ອງຈາກວ່າ ປະຊາກອນມີຈຳນວນໜ້ອຍ. ສະນັ້ນ, ຈຶ່ງນຳມາເປັນກຸ່ມຕົວຢ່າງທັງໝົດ.

### 2.3 ເຄື່ອງມືໃນການເກັບກຳຂໍ້ມູນ

#### 2.3.1 ເຄື່ອງມືດຳເນີນການວິໄຈ

ການຄົ້ນຄວ້າຄັ້ງນີ້ຜູ້ຄົ້ນຄວ້າໄດ້ໃຊ້ວິທີການສຶກສາແບບປະລິມານ ໂດຍໃຊ້ແບບສອບຖາມ ເພື່ອໃຫ້ໄດ້ຂໍ້ມູນທີ່ຖືກຕ້ອງຕາມຈຸດປະສົງຂອງການວິໄຈທີ່ກຳນົດໄວ້ ໂດຍຈຳແນກເປັນ 5 ດ້ານ. ລວມທັງໝົດມີຈຳນວນ 30 ຂໍ້ ດັ່ງນີ້:

ແບບສອບຖາມ ທັດສະນະຄະຕິຂອງນັກສຶກສາທີ່ມີຕໍ່ການຮຽນ-ການສອນ ວິຊາ ວິໄຈສາຍຄູປະຖົມ ຊັ້ນສູງໄລຍະພັກສົ້ນປີຮຽນ ແບ່ງອອກເປັນ 2 ຕອນຄື:

**ຕອນທີ 1:** ເປັນຄຳຖາມກ່ຽວກັບທັດສະນະຄະຕິຂອງນັກສຶກສາທີ່ມີຕໍ່ການຮຽນ-ການສອນ ວິຊາວິໄຈ ໃນວິທະຍາໄລຄູຄັງໄຂ ມີທັງໝົດ 5 ດ້ານ, ດ້ານລະ 5 ຂໍ້, ລວມທັງໝົດມີ 25 ຂໍ້.

**ຕອນທີ 2:** ເປັນຄຳຖາມກ່ຽວກັບບັນຫາອຸປະສັກ ແລະ ແນວທາງປັບປຸງການຮຽນ-ການສອນ ວິຊາວິໄຈ ໃນວິທະຍາໄລຄູຄັງໄຂ ມີທັງໝົດ 5 ດ້ານ.

ລັກສະນະຂອງແບບສອບຖາມເປັນແບບມາດຕາສ່ວນປະມານຄ່າ (Rating Scale) 5 ລະດັບ ໂດຍກຳນົດເກນການໃຫ້ຄະແນນໃນການວິເຄາະຂໍ້ມູນດັ່ງນີ້:

ລະດັບ 5 ໝາຍເຖິງ ທັດສະນະຄະຕິຫຼາຍທີ່ສຸດ

ລະດັບ 4 ໝາຍເຖິງ ທັດສະນະຄະຕິຫຼາຍ

ລະດັບ 3 ໝາຍເຖິງ ທັດສະນະຄະຕິປານກາງ

ລະດັບ 2 ໝາຍເຖິງ ທັດສະນະຄະຕິໜ້ອຍ

ລະດັບ 1 ໝາຍເຖິງ ທັດສະນະຄະຕິໜ້ອຍທີ່ສຸດ

#### 2.3.2 ວິທີເກັບກຳຂໍ້ມູນ

ຜູ້ວິໄຈໄດ້ມີວິທີການດຳເນີນການເກັບກຳຮວບຮວມຂໍ້ມູນໂດຍມີຂັ້ນຕອນດຳເນີນງານດັ່ງນີ້:

1. ຜູ້ວິໄຈດຳເນີນການເກັບຂໍ້ມູນໂດຍການແຈກຢາຍແບບສອບຖາມໃຫ້ກັບປະຊາກອນກຸ່ມຕົວຢ່າງທີ່ກຳນົດໄວ້ຈຳນວນ 30 ຄົນ.

2. ຢາຍແບບສອບຖາມໃຫ້ນັກສຶກສາຄູປະຖົມໄລຍະພັກທ້າຍສົກຮຽນ ສົກຮຽນ 2022-2023 ທີ່ວິທະຍາໄລຄູຄັງໄຂ. ເຊິ່ງໄດ້ແບບສອບຖາມຄືນມາທັງໝົດ 30 ສະບັບເທົ່າກັບ 100%.

### 2.4 ສະຖິຕິທີ່ໃຊ້ໃນການວິໄຈ

ການຄົ້ນຄວ້າຄັ້ງນີ້ ແມ່ນໄດ້ວິເຄາະຂໍ້ມູນໂດຍນຳໃຊ້ Microsoft Excel ໃນການຫາຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຖານຂອງຄະແນນເປັນແຕ່ລະດ້ານ ແລະ ເປັນແຕ່ລະຂໍ້ໂດຍໃຊ້ເກນການແປຄວາມໝາຍຂອງຄ່າສະເລ່ຍດັ່ງນີ້:

ຄ່າສະເລ່ຍ 4.51-5.00 ໝາຍເຖິງ ທັດສະນະຄະຕິຫຼາຍທີ່ສຸດ

ຄ່າສະເລ່ຍ 3.51-4.50 ໝາຍເຖິງ ທັດສະນະຄະຕິຫຼາຍ

ຄ່າສະເລ່ຍ 2.51-3.50 ໝາຍເຖິງ ທັດສະນະຄະຕິປານກາງ

ຄ່າສະເລ່ຍ 1.51-2.50 ໝາຍເຖິງ ທັດສະນະຄະຕິໜ້ອຍ

ຄ່າສະເລ່ຍ 1.00-1.50 ໝາຍເຖິງ ທັດສະນະຄະຕິໜ້ອຍທີ່ສຸດ

## 3. ຜົນໄດ້ຮັບ

ທັດສະນະຄະຕິຂອງນັກສຶກສາທີ່ມີຕໍ່ການຮຽນ-ການສອນວິຊາ ວິໄຈ ສາຍຄູປະຖົມຊັ້ນສູງໄລຍະພັກສົ້ນປີຮຽນ ລະບົບ 11+1+2 ປີ 1 ຂ ໃນວິທະຍາໄລຄູຄັງໄຂ ສົກຮຽນ 2022-2023 ເຊິ່ງຜົນທີ່ໄດ້ຮັບມີດັ່ງນີ້:

### 3.1 ຜົນການສຶກສາທັດສະນະຄະຕິຂອງນັກສຶກສາຕໍ່ການຮຽນ-ການສອນ ວິຊາ ວິໄຈ ໃນສາຍຄູປະຖົມຊັ້ນສູງໄລຍະພັກສົ້ນປີຮຽນ ໃນວິທະຍາໄລຄູຄັງໄຂ.

ພົບວ່າ ໂດຍລວມທຸກດ້ານແມ່ນຢູ່ໃນລະດັບປານກາງ ເຊິ່ງມີຄ່າສະເລ່ຍເທົ່າກັບ 3.41 ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.03. ໃນນັ້ນສະແດງໃຫ້ເຫັນວ່າ: ດ້ານການວັດ ແລະ ປະເມີນຜົນ ແມ່ນມີທັດສະນະຄະຕິຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະເລ່ຍເທົ່າກັບ ($\bar{X}$=3.61; SD= 0.03), ຕໍ່ມາແມ່ນ ດ້ານເນື້ອໃນຫຼັກສູດ ເຊິ່ງມີຄ່າສະເລ່ຍເທົ່າກັບ ($\bar{X}$=3.57; SD=0.02), ດ້ານການຈັດກິດຈະກຳການຮຽນ-ການສອນ ເຊິ່ງມີຄ່າສະເລ່ຍເທົ່າກັບ ($\bar{X}$=3.55; SD=0.03), ດ້ານການນຳໃຊ້ສື່ການສອນ ເຊິ່ງມີຄ່າສະເລ່ຍເທົ່າກັບ ($\bar{X}$=3.38; SD=0.03), ດ້ານສະພາບແວດລ້ອມ ເຊິ່ງມີຄ່າສະເລ່ຍເທົ່າກັບ ($\bar{X}$=2.96; SD=0.03).

### 3.2 ຜົນການສຶກສາບັນຫາອຸປະສັກ ແລະ ແນວທາງປັບປຸງການຮຽນ-ການສອນ ວິຊາ ວິໄຈ ໃນວິທະຍາໄລຄູຄັງໄຂ.

**ດ້ານເນື້ອໃນຂອງຫຼັກສູດ** ບັນຫາຄືໃນດ້ານເນື້ອຫາທີ່ສອນບໍ່ເໝາະສົມກັບເວລາ ແລະ ອ່ານເຂົ້າໃຈຍາກ ຂໍ້ສະເໜີແນະຄືການຈັດແບ່ງເວລາໃຫ້ສອນຄົບ ແລະ ເນື້ອຫາທີ່ສອນອ່ານເຂົ້າໃຈງ່າຍ.

**ດ້ານການຈັດກິດຈະກຳການຮຽນ-ການສອນ** ບັນຫາຄືຜູ້ສອນບໍ່ຄ່ອຍຈັດກິດຈະກຳດ້ານການສຶກສານອກສະຖານທີ່ ແລະ ການສອນອະທິບາຍເນື້ອໃນໄດ້ຊັດເຈນ, ເຂົ້າໃຈງ່າຍ ຂໍ້ສະເໜີແນະຄືຄວນຈັດກິດຈະກຳໃຫ້ນັກສຶກສາ ມີສ່ວນຮ່ວມອະທິປາຍໃນຊັ້ນຮຽນຫຼາຍຂຶ້ນ ແລະ ມີການຈັດກິດຈະກຳດ້ານການສຶກສານອກສະຖານທີ່ໃຫ້ຫຼາຍກວ່ານີ້.

**ດ້ານການໃຊ້ສື່ການຮຽນ-ການສອນ** ບັນຫາຄືຜູ້ສອນມີການໃຊ້ສື່ທີ່ບໍ່ທັນສະໄໝ ແລະ ບໍ່ໜ້າສົນໃຈຜູ້ຮຽນຮຽນຮູ້ຜ່ານສື່ຈາກສະພາບຈິງນ້ອຍ, ການນຳໃຊ້ສື່ປະກອບການສອນມີຄວາມເຂົ້າໃຈງ່າຍ ຂໍ້ສະເໜີແນະຄື ການປັບໃຊ້ສື່ທີ່ໜ້າສົນໃຈ, ທັນສະໄໝຂຶ້ນ ແລະ ຄວນໃຫ້ຜູ້ຮຽນໄດ້ຮຽນຮູ້ຈາກສື່ຈາກສະພາບຈິງ.

**ດ້ານການຈັດສະພາບແວດລ້ອມ** ບັນຫາຄືຫໍສະໝຸດມີບໍລິການ ອຳນວຍຄວາມສະດວກ ໃນການຄົ້ນຄວ້າພາຍໃນໂຮງຮຽນມີແຫຼ່ງຮຽນຮູ້ນ້ອຍ, ຫ້ອງຮຽນມີແສງສະຫວ່າງ ແລະ ການຖ່າຍເທຂອງອາກາດທີ່ດີ ຂໍ້ສະເໜີແນະຄື ຄວນຂໍຄວາມຮ່ວມມືຜູ້ບໍລິຫານ, ຄູ ແລະ ນັກສຶກສາຊ່ວຍກັນຈັດສະພາບແວດລ້ອມພາຍໃນໂຮງຮຽນ ແລະ ຫ້ອງຮຽນໃຫ້ຕໍ່ການຮຽນ-ການສອນໃຫ້ຫຼາຍຂຶ້ນແລະ ຈັດແຫຼ່ງການຮຽນຮູ້ໃຫ້ຫຼາຍ.

**ດ້ານການວັດຜົນ ແລະ ປະເມີນຜົນ** ບັນຫາຄືຄູສອນບໍ່ຄ່ອຍມີການປະເມີນຜົນຫຼັງຮຽນ, ການທົດສອບບໍ່ຫຼາກຫຼາຍວິທີ ແລະ ບໍ່ມີການທົດສອບສະໝ່ຳສະເໝີ ຂໍ້ສະເໜີແນະຄື ຄວນມີການປະເມີນຜົນຫຼັງຮຽນໃຫ້ຫຼາຍເທື່ອ, ຄວນຫາວິທີການປະເມີນຜົນທີ່ຫຼາກຫຼາຍ ແລະ ມີການທົດສອບຄວາມຮູ້ນັກສຶກສາໃຫ້ສະໝ່ຳສະເໝີຫຼາຍຂຶ້ນ

## 4. ວິພາກຜົນ

ຜ່ານການວິໄຈກ່ຽວກັບຫົວຂໍ້ ທັດສະນະຄະຕິຂອງນັກສຶກສາທີ່ມີຕໍ່ການຮຽນ-ການສອນ ວິຊາ ວິໄຈສາຍຄູປະຖົມຊັ້ນສູງໄລຍະພັກສົ້ນປີຮຽນ ລະບົບ 11+1+2 ປີ 1 ຂ ໃນວິທະຍາໄລຄູຄັງໄຂ ສົກຮຽນ 2022-2023.

❖ **ດ້ານເນື້ອໃນຂອງຫຼັກສູດ** ນັກສຶກສາມີທັດສະນະຄະຕິຕໍ່ການຮຽນ-ການສອນ ວິຊາວິໄຈ ໂດຍລວມແມ່ນຢູ່ໃນລະດັບຫຼາຍ ແລະ ແຍກຕາມລາຍຂໍ້ແມ່ນຢູ່ໃນລະດັບຫຼາຍ ເນື່ອງຈາກວ່າ ເນື້ອໃນວິຊາທີ່ຮຽນສາມາດເປັນພື້ນຖານໃນການສຶກສາຕໍ່ໄດ້, ເນື້ອໃນບົດຮຽນມີຄວາມເໝາະສົມກັບເວລາຮຽນ, ເນື້ອໃນວິຊາທີ່ຮຽນມີການຈັດລຳດັບ

ຄວາມຍາກງ່າຍ ແລະ ຢູ່ໃນລະດັບປານກາງ 2 ຂໍ້ຄື: ເນື້ອໃນບົດຮຽນມີຄວາມໜ້າສົນໃຈ, ເນື້ອໃນຄວາມຮູ້ໃນລາຍວິຊາທີ່ຮຽນມີປະໂຫຍດຕໍ່ການດໍາລົງຊີວິດ ເມື່ອພິຈາລະນາແລ້ວ ຜົນການວິໄຈດັ່ງກ່າວ ສອດຄ່ອງກັບ Kaemmany (2550) ໄດ້ໃຫ້ສະເໜີຄວາມຄິດເຫັນກ່ຽວກັບດ້ານເນື້ອໃນວ່າ ການຈັດກິດຈະກໍາໃຫ້ສອດຄ່ອງກັບຜູ້ຮຽນນັ້ນຈະຕ້ອງມີລັກສະນະທີ່ສອດຄ່ອງກັບເນື້ອໃນວິຊາ, ເນື້ອໃນວິຊາມີຫຼາຍປະເພດເຊັ່ນ ປະເພດຂໍ້ເທັດຈິງ ການແກ້ບັນຫາ, ການຄິດສ້າງສັນ, ທັກສະ, ເຈດຄະຕິ ແລະ ຄ່ານິຍົມ. ນອກນັ້ນ, ຍັງສອດຄ່ອງກັບ Vedkama (2563) ວິໄຈໃນຊັ້ນຮຽນ ເລື່ອງ ທັດສະນະຄະຕິທີ່ມີຕໍ່ວິຊາພູມີສາດຂອງນັກສຶກສາ ຊັ້ນປະ ຖົມສຶກສາ ປີທີ 3 ໂຮງ ຮຽນພະຍາໄທ ມີຈຸດປະສົງເພື່ອສໍາຫຼວດທັດສະນະຄະຕິຂອງນັກສຶກສາທີ່ມີຕໍ່ວິຊາພູມີສາດ ເພື່ອໃຫ້ນັກສຶກສາເຫັນໄດ້ເຖິງຄວາມສໍາຄັນ ແລະ ຄວາມ ຈໍາເປັນທີ່ຈະຕ້ອງຮຽນວິຊານີ້ ດ້ວຍວິທີໃຊ້ແບບສໍາຫຼວດຜົນການວິໄຈພົບວ່າ: ດ້ານເນື້ອໃນລາຍວິຊາ ມີລະດັບຄວາມຍາກຫຼາຍສໍາລັບນັກສຶກສາ ແລະ ເນື້ອໃນລາຍວິຊາບໍ່ຕໍ່ເນື່ອງ ເພາະຮຽນເປັນພາກໆ ໃນປະເທດໄທ ອີກທັງນັກຮຽນຍັງຂາດຄວາມຮູ້ພື້ນຖານດ້ານພູມີສາດ.

❖ **ດ້ານການຈັດກິດຈະກໍາການຮຽນ-ການສອນ** ນັກສຶກສາມີທັດສະນະຄະຕິຕໍ່ການຮຽນ-ການສອນ ວິຊາວິໄຈໂດຍລວມ ແມ່ນຢູ່ໃນລະດັບຫຼາຍ ແລະ ແຍກຕາມລາຍຂໍ້ແມ່ນຢູ່ໃນລະດັບຫຼາຍ ເນື່ອງຈາກວ່າ ການສອນມີຄວາມເປັນກັນເອງກັບຜູ້ຮຽນ, ເອົາໃຈໃສ່ ແລະ ທຸ່ມເທຕໍ່ບັນຫາໃນການຮຽນຂອງນັກສຶກສາ, ຜູ້ສອນຈັດກິດຈະກໍາໃຫ້ນັກສຶກສາມີສ່ວນຮ່ວມໃນການອະພິປາຍໃນຫ້ອງຮຽນ ແລະ ຢູ່ໃນລະດັບປານກາງເພາະວ່າ ການສອນອະທິບາຍເນື້ອໃນໄດ້ບໍ່ຊັດເຈນເທົ່າທີ່ຄວນ, ຍັງບໍ່ມີການຈັດກິດຈະກໍາດ້ານການສຶກສານອກສະຖານທີ່ ເມື່ອພິຈາລະນາແລ້ວຜົນການວິໄຈ ສອດຄ່ອງກັບ Souphatonsimkasem (2554) ກ່າວວ່າ ການຈັດການຮຽນ-ການສອນໝາຍເຖິງ ຂະບວນການພົວພັນລະຫວ່າງຜູ້ສອນກັບຜູ້ຮຽນເພື່ອຖ່າຍທອດຄວາມຮູ້, ຄວາມຄິດ ຫຼື ແບບປະຕິບັດເພື່ອໃຫ້ຜູ້ຮຽນເກີດການຮຽນຮູ້ມີປະສົບການເຈຕະຄະຕິ ແລະ ພຶດຕິກໍາຕາມເປົ້າໝາຍທີ່ກໍານົດໄວ້ຢ່າງມີປະສິດທິພາບໂດຍອາໄສຂະບວນການຈັດການຮຽນ-ການສອນຕ່າງໆ ທີ່ມີຄວາມເໝາະສົມກັບຜູ້ຮຽນ.

❖ **ດ້ານການໃຊ້ສື່ການຮຽນ-ການສອນ** ນັກສຶກສາມີທັດສະນະຄະຕິຕໍ່ການຮຽນ-ການສອນ ວິຊາວິໄຈ ໂດຍລວມ ແມ່ນຢູ່ໃນລະດັບປານກາງ ເກືອບໝົດທຸກຂໍ້ ແລະ ແຍກຕາມລາຍຂໍ້ແມ່ນຢູ່ໃນລະດັບຫຼາຍ 1 ຂໍ້ ເນື່ອງຈາກວ່ານັກສຶກສາເກີດການຮຽນຮູ້ຜ່ານສື່ການສອນ, ມີລະບົບອິນເຕີເນັດທີ່ຊ່ວຍໃຫ້ຊອກຫາຂໍ້ມູນພຽງພໍ, ສື່ການສອນມີຄວາມທັນສະໄໝ, ໜ້າສົນໃຈ ເມື່ອພິຈາລະນາແລ້ວ ຜົນການວິໄຈ ສອດຄ່ອງກັບ Sanphan (2558) ໄດ້ເວົ້າວ່າ ສື່ການສອນ ເປັນເຄື່ອງມືຂອງການຮຽນຮູ້, ເຮັດໜ້າທີ່ຖ່າຍທອດຄວາມຮູ້, ຄວາມເຂົ້າໃຈຄວາມຮູ້ສຶກ, ພັດທະນາທັກສະ ແລະ ປະສົບການ, ສ້າງສະຖານະການຮຽນຮູ້ໃຫ້ແກ່ຜູ້ຮຽນ, ກະຕຸ້ນໃຫ້ເກີດການພັດ ທະນາຄວາມສາມາດໃນການໄຕ່ຕອງ, ການຄິດສ້າງສັນ, ການຄິດຢ່າງມີເຫດມີຜົນ, ຊ່ວຍເສີມສ້າງຄຸນນະທໍາ, ຈັນຍາບັນ ແລະ ຄ່ານິຍົມໃຫ້ແກ່ຜູຮຽນ.

❖ **ດ້ານການຈັດສະພາບແວດລ້ອມ** ນັກສຶກສາມີທັດສະນະຄະຕິຕໍ່ການຮຽນ-ການສອນ ວິຊາວິໄຈໂດຍລວມ ແລະ ແຍກຕາມລາຍຂໍ້ແມ່ນຢູ່ໃນລະດັບປານກາງທຸກຂໍ້ ທາງນີ້ເປັນເພາະວ່າ ຫໍສະໝຸດຍັງບໍ່ມີຂໍ້ມູນຄົບຖ້ວນເພື່ອໃຫ້ນັກສຶກສາຄົ້ນຄວ້າ, ຫ້ອງຮຽນຍັງບໍ່ໄດ້ມາດຕະຖານ ແລະ ມີສຽງລົບກວນຈາກພາຍນອກຢູ່ຕະຫຼອດເວລາ ເມື່ອພິຈາ ລະນາແລ້ວ ຜົນການວິໄຈ ສອດຄ່ອງກັບ Khongteing (2542) ສິ່ງແວດລ້ອມທີ່ມີຜົນກະທົບໂດຍກົງຕໍ່ການຮຽນ-ການສອນປະກອບດ້ວຍ 1) ສິ່ງແວດລ້ອມທາງກາຍຍະພາບເຊັ່ນ: ອາຄານສະຖານທີ່, ຫ້ອງຮຽນ, ຫ້ອງສະໝຸດ, ສະຖານທີ່ພັກຜ່ອນ ແລະ ອື່ນໆ ສິ່ງເຫຼົ່ານີ້ ຜູ້ບໍລິຫານໂຮງ ຮຽນຈະຕ້ອງໃຫ້ຄວາມສົນໃຈສະໜັບສະໜູນ, ເຮັດໃຫ້ຢູ່ໃນເກນທີ່ດີມີມາດຕະຖານທີ່ພໍຈະສົ່ງເສີມງານວິຊາການໃຫ້ຈະເລີນງອກງາມໄດ້.

❖ **ດ້ານການວັດຜົນ ແລະ ປະເມີນຜົນ** ນັກສຶກສາມີທັດສະນະຄະຕິຕໍ່ການຮຽນ-ການສອນ ວິຊາວິໄຈໂດຍລວມ ແລະ ແຍກຕາມລາຍຂໍ້ ແມ່ນຢູ່ໃນລະດັບຫຼາຍເກືອບທຸກຂໍ້ ເນື່ອງຈາກວ່າ ການໃຊ້ຂໍ້ສອບເນັ້ນຄວາມຄິດຄວາມເຂົ້າໃຈຢ່າງມີເຫດຜົນ, ມີການກໍານົດເກນການວັດຜົນ, ປະເມີນຜົນຢ່າງຊັດເຈນ ແລະ ຍຸດຕິທໍາ ແລະ ດ້ວຍຫຼາຍວິທີ ເມື່ອພິ ຈາລະນາແລ້ວຜົນການວິໄຈສອດຄ່ອງກັບ Cgaisai (2552) ໃຫ້ຄວາມໝາຍວ່າການວັດຜົນ (Measure ment) ຄືຂະບວນການທີ່ຈະໄດ້ມາ ເຊິ່ງຂໍ້ມູນຕາມຈຸດມຸ່ງໝາຍຂອງການຮຽນ-ການສອນ ໂດຍໃຊ້ເຄື່ອງມື/ວິທີການວັດທາງການສຶກສາໄດ້ຫຼາກຫຼາຍວິທີການທົດສອບ, ການສັງເກດພຶດຕິກໍາຜູ້ຮຽນ, ການສອບຖາມ/

ສໍາພາດ, ການເບິ່ງຈາກຜົນງານທີ່ສົ່ງ ແລະ ຈາກປະຕິກິລິຍາ/ການເຂົ້າຮ່ວມກິດຈະ ກໍາການຮຽນ-ການສອນ ເຊິ່ງຂໍ້ມູນທີ່ໄດ້ຈາກການວັດຜົນນີ້ຈະນໍາໄປສູ່ຂັ້ນຕອນການປະເມີນຜົນ (Evaluation) ຕໍ່ໄປ.

## 5. ສະຫຼຸບ

ຈາກການສຶກສາຄົ້ນຄວ້າທີ່ກ່ຽວກັບ ທັດສະນະຄະຕິຂອງນັກສຶກສາທີ່ມີຕໍ່ການຮຽນ-ການສອນ ວິຊາວິໄຈ ສາຍຄູປະຖົມຊັ້ນສູງໄລຍະພັກສົ້ນປີຮຽນ ລະບົບ 11+1+2 ປີ 1 ຂ ໃນວິທະຍາໄລຄູຄັງໄຂ ສົກຮຽນ 2022-2023 ສາມາດສະຫຼຸບຜົນການຄົ້ນຄວ້າໄດ້ດັ່ງນີ້:

1. ຜົນການສຶກສາ ທັດສະນະຄະຕິຂອງນັກສຶກສາທີ່ມີຕໍ່ການຮຽນ-ການສອນ ວິຊາ ວິໄຈສາຍຄູປະຖົມຊັ້ນສູງໄລຍະພັກສົ້ນປີຮຽນ ໃນວິທະຍາໄລຄູຄັງໄຂ ສົກຮຽນ 2022-2023. ໂດຍລວມທຸກດ້ານແມ່ນຢູ່ໃນລະດັບປານກາງ. ເມື່ອແຍກເປັນລາຍຂໍ້ ແມ່ນຢູ່ໃນລະດັບຫຼາຍ 3 ຂໍ້ ແລະ ລະດັບປານກາງ 2 ຂໍ້.

2. ຜົນການສຶກສາ ບັນຫາອຸປະສັກ ແລະ ແນວທາງປັບປຸງການຮຽນ-ການສອນ ວິຊາວິໄຈ ສາຍຄູປະຖົມຊັ້ນສູງໄລຍະພັກສົ້ນປີຮຽນ ໃນວິທະຍາໄລຄູຄັງໄຂ ສົກຮຽນ 2022-2023. ມີທັງໝົດ 5 ດ້ານຄື: ດ້ານເນື້ອໃນຂອງຫຼັກສູດ, ດ້ານການຈັດກິດຈະກໍາການຮຽນ-ການສອນ, ດ້ານການໃຊ້ສື່ການຮຽນ-ການສອນ, ດ້ານການຈັດສະພາບແວດລ້ອມ ແລະ ດ້ານການວັດຜົນ ແລະ ປະເມີນຜົນ. ເຫັນວ່າ ມີບັນຫາອຸປະສັກ ແລະ ແນວທາງປັບປຸງການຮຽນ-ການສອນມີຄວາມແຕກຕ່າງກັນໄປຕາມແຕ່ລະດ້ານ ເຊິ່ງກໍ່ໃຫ້ເກີດຄວາມສາມາດຄວາມຄິດ ແລະ ກະຕຸ້ນໃຫ້ຜູ້ເຂົ້າຮ່ວມ ,ປະຕິບັດກິດຈະກໍາໄດ້ໃຊ້ທັກສະຢ່າງເຕັມທີ່ໃນການຮຽນຮູ້ , ຊ່ວຍໃຫ້ມີໂອກາດສ້າງປະຕິສໍາພັນກັບເພື່ອນຮ່ວມງານ ແລະ ສະພາບແວດລ້ອມອ້ອມຕົວຕະຫຼອດຈົນສາມາດສ້າງອົງຄວາມຮູ້ໄດ້ດ້ວຍຕົນເອງນໍາຄວາມຮູ້ທີ່ໄດ້ເຝິກໄປປະ , ຍຸກໃຊ້ໃນສະພາບຄວາມເປັນຈິງໄດ້ໃນທຸກໆສະຖານະການຈິງ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດໃນຮູບການໃດໜຶ່ງ ຂ້າພະເຈົ້າ, ມີຄວາມຍິນດີທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


Bouathavong, D. (2021). *Student's attitude towards studying geology in the geogra phy teacher's line, 12+4 system, 3rd year, academic year 2020-2021*. Khangkhay Teacher training College.

Cgaisai, N. (2552). *A guide to measuring and evaluating learning*. Soulatthany: Songkalat karin University.

Champathong, P. (2009). *Practical research.* Ministry of Education Department of Teacher Training. p. 49.

Kaemmany, T. (2550). *The process of solving problems according to the principles of ethics 4* . The capital of Bangkok: Chulalongkorn University Publishing House.

Khongteing, S. (2542). *Principles of educational administration*. Print times 2, The capital of Bangkok: Publishing House Ram Kham Thaeng University.

Mekraksavanit, N. (2515). *General teaching development studies.* The capital of Bangkok. Houngherngtham Publishing House. p. 33.

Pahtxarapynakoun, B. (2549). *Studying the attitudes of sixth year elementary students towards the use of CISST teaching methods*. The capital of Bangkok: Srinakarin virolod University.

Phanit, K. (2517). *Educational philosophy Existentialism*. Journal of Science.

Panzad, S. (2545). *Attitudes towards teaching and learning sociology of third year high school students in a private school in Chiang Mai province. Chiang Mai* University.

Sanphan, V. (2558). *Organization of the learning process focuses on students as important according to the basic education curriculum.* The capital of Bangkok. p. 271.

Souphatonsimkasem, A. (2554). *Learner-centered teaching-learning management.* The capital of Bangkok. Doungkamonsamai Publishing House.

Souraila binsamaae, S. (2553). *The attitudes of the students of Radzapha University*

*towards learning the Malay language*. Radzaphat University. p. 29.

Vedkama, A. (2563). *Research in class Attitudes towards the subject of geography of students in the 3 rd year of primary education at Phaya Thai School*. *Phaya Thai Schoo* Raxathevi area The capital of Bangkok.

Vongyai, V. (2544). *The development of the curriculum process of the educational network of the administrative network school manages the basic education curriculum in the education area of Pitsanu Luok.* Naresuan University, p. 50-53.

Xadxamnan, P. (2560). *Measuring the attitude towards the subject of history (S 21102) of the students in the 1st year of high school*. Terngviyakom school Chiang ray Province.

Yangjiamoua, V. (2019). *A guide to writing a graduation report and Study the teaching*. Khangkhay Teacher training college.

ຕາຕະລາງທີ 1: ສະແດງຜົນການວິເຄາະ ທັດສະນະຄະຕິຂອງນັກສຶກສາທີ່ມີຕໍ່ການຮຽນ-ການສອນ ວິຊາ ວິໄຈ ໂດຍລວມທຸກດ້ານ.

| ລ/ດ | ທັດສະນະຄະຕິໃນແຕ່ລະດ້ານ | $\bar{X}$ | SD | ທັດສະນະຄະຕິ |
|---|---|---|---|---|
| 1 | ດ້ານເນື້ອໃນຫຼັກສູດ | 3.57 | 0.02 | ຫຼາຍ |
| 2 | ດ້ານການຈັດກິດຈະກໍາການຮຽນ-ການສອນ | 3.55 | 0.03 | ຫຼາຍ |
| 3 | ດ້ານການນໍາໃຊ້ສື່ການສອນ | 3.38 | 0.03 | ປານກາງ |
| 4 | ດ້ານສະພາບແວດລ້ອມ | 2.96 | 0.03 | ປານກາງ |
| 5 | ດ້ານການວັດ ແລະ ປະເມີນຜົນ | 3.61 | 0.03 | ຫຼາຍ |
| | ລວມ | 3.41 | 0.03 | ປານກາງ |

ຕາຕະລາງທີ 2: ສະແດງຜົນການວິເຄາະ ດ້ານເນື້ອໃນຫຼັກສູດ ໂດຍລວມ ແລະ ແຍກຕາມລາຍຂໍ້.

| ລ/ດ | ດ້ານເນື້ອໃນຫຼັກສູດ | $\bar{X}$ | SD | ທັດສະນະຄະຕິ |
|---|---|---|---|---|
| 1 | ເນື້ອໃນບົດຮຽນມີຄວາມເໝາະສົມກັບເວລາຮຽນ | 3.70 | 0.03 | ຫຼາຍ |
| 2 | ເນື້ອໃນຄວາມຮູ້ໃນລາຍວິຊາທີ່ຮຽນມີປະໂຫຍດຕໍ່ການດໍາລົງຊີວິດ | 3.37 | 0.02 | ປານກາງ |
| 3 | ເນື້ອໃນວິຊາທີ່ຮຽນມີການຈັດລໍາດັບຄວາມຍາກງ່າຍ | 3.57 | 0.03 | ຫຼາຍ |
| 4 | ເນື້ອໃນບົດຮຽນມີຄວາມໜ້າສົນໃຈ | 3.47 | 0.02 | ປານກາງ |
| 5 | ເນື້ອໃນວິຊາທີ່ຮຽນສາມາດເປັນພື້ນຖານໃນການສຶກສາຕໍ່ໄດ້ | 3.73 | 0.02 | ຫຼາຍ |
| | ລວມ | 3.57 | 0.02 | ຫຼາຍ |

ຕາຕະລາງທີ 3: ສະແດງຜົນການວິເຄາະ ດ້ານການຈັດກິດຈະກໍາການຮຽນ-ການສອນ ໂດຍລວມ ແລະ ແຍກຕາມລາຍຂໍ້.

| ລ/ດ | ດ້ານການຈັດກິດຈະກໍາການຮຽນ-ການສອນ | $\bar{X}$ | SD | ທັດສະນະຄະຕິ |
|---|---|---|---|---|
| 1 | ຜູ້ສອນຈັດກິດຈະກໍາໃຫ້ນັກສຶກສາມີສ່ວນຮ່ວມໃນການອະພິປາຍໃນຫ້ອງຮຽນ | 3.53 | 0.02 | ຫຼາຍ |
| 2 | ມີການຈັດກິດຈະກໍາດ້ານການສຶກສານອກສະຖານທີ່ | 3.00 | 0.02 | ປານກາງ |
| 3 | ການສອນມີຄວາມເປັນກັນເອງກັບຜູ້ຮຽນ | 3.60 | 0.03 | ຫຼາຍ |
| 4 | ເອົາໃຈໃສ່ ແລະ ທຸ່ມເທຕໍ່ບັນຫາໃນການຮຽນຂອງນັກສຶກສາ | 3.57 | 0.03 | ຫຼາຍ |

| | | | | |
|---|---|---|---|---|
| 5 | ການສອນອະທິບາຍເນື້ອໃນໄດ້ຊັດເຈນ, ເຂົ້າໃຈງ່າຍ | 3.40 | 0.03 | ປານກາງ |
| | ລວມ | 3.55 | 0.03 | ຫຼາຍ |

ຕາຕະລາງທີ 4: ສະແດງຜົນການວິເຄາະ ດ້ານການນຳໃຊ້ສື່ການສອນ ໂດຍລວມ ແລະ ແຍກຕາມລາຍຂໍ້.

| ລ/ດ | ດ້ານການນຳໃຊ້ສື່ການສອນ | $\bar{X}$ | SD | ທັດສະນະຄະຕິ |
|---|---|---|---|---|
| 1 | ການນຳໃຊ້ສື່ເໝາະສົມ, ກົງກັບເນື້ອໃນບົດຮຽນ | 3.20 | 0.03 | ປານກາງ |
| 2 | ການນຳໃຊ້ສື່ປະກອບການສອນມີຄວາມເຂົ້າໃຈງ່າຍ | 3.27 | 0.03 | ປານກາງ |
| 3 | ນັກສຶກສາເກີດການຮຽນຮູ້ຜ່ານສື່ການສອນ | 3.50 | 0.03 | ຫຼາຍ |
| 4 | ສື່ການສອນມີຄວາມທັນສະໄໝ, ໜ້າສົນໃຈ | 3.40 | 0.02 | ປານກາງ |
| 5 | ມີລະບົບອິນເຕີເນັດທີ່ຊ່ວຍໃຫ້ຊອກຫາຂໍ້ມູນພຽງພໍ | 3.49 | 0.03 | ປານກາງ |
| | ລວມ | 3.38 | 0.03 | ປານກາງ |

ຕາຕະລາງທີ 5: ສະແດງຜົນການວິເຄາະ ດ້ານສະພາບແວດລ້ອມ ໂດຍລວມ ແລະ ແຍກຕາມລາຍຂໍ້.

| ລ/ດ | ດ້ານສະພາບແວດລ້ອມ | $\bar{X}$ | SD | ທັດສະນະຄະຕິ |
|---|---|---|---|---|
| 1 | ຫ້ອງຮຽນມີຄວາມສະອາດ ແລະ ເປັນລະບຽບຮຽບຮ້ອຍ | 3.00 | 0.02 | ປານກາງ |
| 2 | ຫ້ອງຮຽນມີແສງສະຫວ່າງ ແລະ ການຖ່າຍເທຂອງອາກາດທີ່ດີ | 2.93 | 0.02 | ປານກາງ |
| 3 | ຫ້ອງຮຽນມີສຽງລົບກວນຈາກພາຍນອກ | 3.20 | 0.02 | ປານກາງ |
| 4 | ຫໍສະໝຸດມີບໍລິການອຳນວຍຄວາມສະດວກໃນການຄົ້ນຄວ້າ | 2.77 | 0.03 | ປານກາງ |
| 5 | ຫ້ອງຮຽນມີຂະໜາດກວ້າງ ແລະ ມີບ່ອນນັ່ງຢ່າງພຽງພໍ | 2.90 | 0.04 | ປານກາງ |
| | ລວມ | 2.96 | 0.03 | ປານກາງ |

ຕາຕະລາງທີ 6: ສະແດງຜົນການວິເຄາະ ດ້ານການວັດ ແລະ ປະເມີນຜົນ ໂດຍລວມ ແລະ ແຍກຕາມລາຍຂໍ້.

| ລ/ດ | ດ້ານການວັດ ແລະ ປະເມີນຜົນ | $\bar{X}$ | SD | ທັດສະນະຄະຕິ |
|---|---|---|---|---|
| 1 | ການໃຊ້ແບບທົດສອບກົງກັບເນື້ອໃນທີ່ສອນ | 3.60 | 0.03 | ຫຼາຍ |
| 2 | ການໃຊ້ຂໍ້ສອບເນັ້ນຄວາມຄິດ, ຄວາມເຂົ້າໃຈຢ່າງມີເຫດຜົນ | 3.73 | 0.03 | ຫຼາຍ |
| 3 | ການສອນມີການປະເມີນຜົນຫຼັງການຮຽນທຸກຄັ້ງ | 3.40 | 0.03 | ປານກາງ |
| 4 | ມີການກຳນົດເກນການວັດຜົນ ແລະ ປະເມີນຜົນຢ່າງຊັດເຈນ ແລະ ຍຸດຕິທຳ | 3.70 | 0.02 | ຫຼາຍ |
| 5 | ມີການວັດຜົນເປັນລາຍບຸກຄົນ ແລະ ເປັນກຸ່ມດ້ວຍຫຼາຍຫຼາຍວິທີ | 3.63 | 0.02 | ຫຼາຍ |
| | ລວມ | 3.61 | 0.03 | ຫຼາຍ |